ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດກອງປະຊຸມໃຫຍ່
# ຜູ້ແທນຊາວໜຸ່ມ ທຫລ ຄັ້ງທີ VIII




ກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມ ທະນາຄານແຫ່ງ ສປປ ລາວ (ທຫລ) ຄັ້ງທີ VIII ໄດ້ສຳເລັດລົງດ້ວຍໝາກຜົນສຳເລັດອັນຈົບງາມໃນວັນທີ 30 ພຶດສະພາ 2020 ທີ່ສະໂມສອນສະຖາບັນການທະນາຄານ ພາຍໃຕ້ການເປັນປະທານຂອງສະຫາຍ ປອ. ອາຄົມ ປຣະເສີດ ເລຂາທິການສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (ຊປປລ), ເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ; ພ້ອມນີ້, ກອງປະຊຸມກໍ່ຍັງຮັບກຽດໃນການເຂົ້າຮ່ວມຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການ ທຫລ ແລະ ສະຫາຍ ອາລຸນໄຊ ສູນນະລາດ ກຳມະການສຳຮອງສູນກາງພັກ, ເລຂາຄະນະບໍລິຫານງານສູນກາງ ຊປປລ; ມີຄະນະບໍລິຫານງານຊາວໜຸ່ມກະຊວງ-ອົງການທຽບເທົ່າ, ບັນດາຄະນະອຳນວຍການທະນາຄານທຸລະກິດ, ຕາງໜ້າສະຫະພັນແມ່ຍິງ-ກຳມະບານ ທຫລ ແລະ ບັນດາຜູ້ແທນຊາວໜຸ່ມຈາກບັນດາຮາກຖານ ເຂົ້າຮ່ວມ.

ກອງປະຊຸມຍັງໄດ້ຮັບຟັງຮ່າງລາຍງານການເມືອງໃນຕະຫຼອດໄລຍະ 5 ປີຜ່ານມາ ຊຶ່ງຄະນະບໍລິຫານງານຊາວໜຸ່ມ ທຫລ ໄດ້ຖືເອົາການສຶກສາອົບຮົມການເມືອງ-ແນວຄິດ ເປັນບັນຫາສຳຄັນຕົ້ນຕໍ ສອດທ້ອຍເຂົ້າທຸກການເຄື່ອນໄຫວວຽກງານ, ເຊື່ອມຊຶມບັນດາແນວທາງ ແລະ ເອກະສານສຳຄັນຕ່າງໆ ເປັນຕົ້ນການປາຖະກະຖາວັນສຳຄັນຕ່າງໆຂອງຊາດ, ຂອງພັກ ແລະ ສາກົນ, ມູນເຊື້ອຊາວໜຸ່ມ, ລະບຽບການຂອງຊາວໜຸ່ມ ອັນໄດ້ເຮັດໃຫ້ຖັນແຖວຊາວໜຸ່ມ ທຫລ ເຮັດສຳເລັດໜ້າທີ່ການເມືອງ ແລະ ວິຊາສະເພາະ ດ້ວຍດີສະເໝີມາ; ປັດຈຸບັນ ມີ 8 ຮາກຖານທີ່ຂຶ້ນກັບ ແລະ ມີສະມາຊິກເພີ່ມຂຶ້ນ 253 ສະຫາຍ; ການປັບປຸງການ ຈັດຕັ້ງ ໂດຍລວມນັບມື້ນັບເຂັ້ມແຂງທັງດ້ານປະລິມານ ແລະ ຄຸນນະພາບ. ພິເສດ ໃນໄລຍະທ້າຍສະໄໝກອງປະຊຸມໃຫຍ່ ສະຫາຍເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ ໄດ້ຮັບການແຕ່ງຕັ້ງເປັນຄະນະເລຂາທິການສູນກາງ ຊປປລ. ພ້ອມນັ້ນ, ສະມາຊິກຊາວໜຸ່ມ ຍັງໄດ້ຖືກເລືອກຕັ້ງເປັນຄະນະນຳຕ່າງໆໃນການຈັດຕັ້ງເບື້ອງພັກ, ເບື້ອງລັດ ແລະ ອົງການຈັດຕັ້ງມະຫາຊົນ ຈຳນວນໜຶ່ງ.






ຄະນະຊາວໜຸ່ມ ແລະ ສະມາຊິກຊາວໜຸ່ມ ທຫລ ຍັງປະກອບສ່ວນເຂົ້າໃນຂະບວນການຕ່າງໆຢ່າງເປັນຂະບວນ ໂດຍເອົາຂະບວນການ 4 ບຸກເປັນໃຈກາງ ໂດຍເອົາໃຈໃສ່ຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ ສາມາດຮັກສາໄດ້ອັດຕາເງິນເຟີ້ ສະເລ່ຍຢູ່ໃນລະດັບ 3,31%, ອັດຕາແລກປ່ຽນທຽບກັບສະກຸນຫຼັກ ເໜັງຕີງໃນຂອບທີ່ກຳນົດໄວ້ (±0,5% ຕໍ່ປີ), ຄຸ້ມຄອງເງິນຕາຕ່າງປະເທດ ແລະ ຮ້ານແລກປ່ຽນເງິນຕາຕາມລະບຽບການຢ່າງເຂັ້ມງວດ; ຫັນການຄຸ້ມຄອງທະນາຄານທຸລະກິດໄປສູ່ລະບົບການຄຸ້ມຄອງຕາມຄວາມສ່ຽງ ແລະ ມາດຕະຖານບາເຊວ, ປັບປຸງກົນໄກ ແລະ ຂັ້ນຕອນການເຂົ້າເຖິງສິນເຊື່ອຂອງ SMEs ໃຫ້ສະດວກຍິ່ງຂຶ້ນ; ສະໜອງແຫຼ່ງທຶນພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຜ່ານລະບົບທະນາຄານ ປະກອບສ່ວນເຂົ້າເຮັດໃຫ້ບ້ານທຸກຍາກຫຼຸດລົງ 200 ບ້ານ, ຄອບຄົວທຸກຍາກຫຼຸດລົງ 12.011 ຄອບຄົວ; ສ້າງໂຄງ ການທີ່ພົ້ນເດັ່ນໄດ້ 187 ໂຄງການ ແລະ ຄອບຄົວຕົວແບບຜະລິດເປັນສິນຄ້າ 191 ຄອບຄົວ ແລະ ບັນຫາອື່ນໆທີ່ຕິດພັນກັບຕະຫຼາດເງິນ-ຕະຫຼາດທຶນ ແລະ ສະຖາບັນການເງິນ.

ຄະນະຊາວໜຸ່ມທຸກຂັ້ນ-ສະມາຊິກຊາວໜຸ່ມ ທຫລ ຍັງໄດ້ເອົາໃຈໃສ່ປະຕິບັດຂໍ້ແຂ່ງຂັນ 4 ບຸກຢ່າງຕັ້ງໜ້າ ໂດຍຖືເອົາການສຶກສາອົບຮົມການເມືອງ-ແນວຄິດເປັນວຽກງານແຖວໜ້າ. ຜ່ານການເຜີຍແຜ່ ເຮັດໃຫ້ສະມາຊິກມີຄວາມໜັກແໜ້ນທາງດ້ານການເມືອງ, ມີແບບແຜນວິທີຄົ້ນຄິດ ແລະ ປະຕິບັດວຽກງານວິຊາສະເພາະຢ່າງມີວິທະຍາສາດ ແລະ ໄດ້ຮັບນາມມະຍົດ 4 ບຸກ 3 ປີຕໍ່ເນື່ອງ ສາມາດຍາດໄດ້ທຸງໄຊນຳໜ້າຈາກສູນກາງ ຊປປລ ໃນຕົ້ນປີ 2020 ແລະ ຮັບຫຼຽນໄຊພິລະອາດຫານ ຊັ້ນ III ຈຳນວນ 1 ຫຼຽນ, ໃບກຽດຕິຄຸນ ຈຳນວນ 1 ໃບ, ໃບຍ້ອງຍໍ ຈຳນວນ 5 ໃບ, ໃບສິນມະນາຄຸນ ຈຳນວນ 1 ໃບ ຈາກສູນກາງ ຊປປລ ແລະ ການຈັດຕັ້ງຂັ້ນເທິງທີ່ກ່ຽວຂ້ອງທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

ກອງປະຊຸມ ຍັງພ້ອມກັນໃຊ້ສິດປະຊາທິປະໄຕ ປ່ອນບັດຄັດເລືອກເອົາຄະນະບໍລິຫານງານຊາວໜຸ່ມ ທຫລ ຊຸດທີ VIII ປະກອບດ້ວຍ 17 ສະຫາຍ, ຍິງ 6 ສະຫາຍ ແລະ ກອງປະຊຸມ ໄດ້ເລືອກເອົາສະຫາຍ ບຸນທະວີ ສຸກດາວົງ ເປັນເລຂາ; ເລືອກເອົາຮອງເລຂາ 3 ສະຫາຍ ປະກອບດ້ວຍສະຫາຍ ສຸລິສັກ ທຳນຸວົງ ເປັນປະທານກວດກາ, ສະຫາຍນາງ ນະຄອນສີ ມະໂນທັມ ແລະ ສະຫາຍ ຈິນດາໄມ ວິໄລທົງສ໌ ແລະ ເລືອກເອົາຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນ ຊປປລ ທົ່ວປະເທດ ຄັ້ງທີ VIII.

ກອງປະຊຸມ ຍັງໄດ້ຮັບຟັງການໂອ້ລົມຈາກສະຫາຍເລຂາຄະນະພັກ, ຜູ້ອຳນວຍການ ທຫລ ແລະ ສະຫາຍເລຂາຄະນະບໍລິຫານງານສູນກາງ ຊປປລ ຊຶ່ງທັງ 2 ສະຫາຍ ໄດ້ກ່າວສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ການຊີ້ນຳ-ນຳພາຂອງຄະນະບໍລິຫານງານຊາວໜຸ່ມ ທຫລ ຊຸດເກົ່າໃນຕະຫຼອດ 5 ປີຜ່ານມາໃນການປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ ສາມາດຍາດໄດ້ຜົນງານຫຼາຍດ້ານ. ພ້ອມນັ້ນ, ຍັງໄດ້ຮຽກຮ້ອງມາຍັງຄະນະບໍລິຫານງານຊາວໜຸ່ມ ທຫລ ຊຸດໃໝ່ ຈົ່ງເຊີດຊູນານະຈິດປະຕິວັດເຂົ້າໃນການເສີມຂະຫຍາຍຜົນງານທີ່ດີເດັ່ນຂອງຄະນະຊາວໜຸ່ມຊຸດເກົ່າ, ເອົາໃຈໃສ່ແກ້ໄຂຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ ໂດຍສະເພາະແມ່ນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມ ທຫລ ຄັ້ງທີ VIII ໃຫ້ປະກົດຜົນເປັນຈິງ ແລະ ກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ